JDB
ທະນາຄານຮ່ວມພັດທະນາ

| **Position ID:** | EXC_CR/MKT |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕໍາແໜ່ງ:** ພະນັກງານ ພົວພັນທຸລະກິດການຕະຫຼາດ

**Position Name:** ***Customer Relationship Officer***

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ສ້າງຄູ່ຮ່ວມມືທາງທຸລະກິດໃໝ່ ໃນຂອບເຂດ Banking bill payment Channels, JDB yes application, Payroll, ປະກັນໄພ, ແລະ ທຸລະກິດອື່ນໆ;
- ວາງແຜນເຂົ້າຫາລູກຄ້າອົງກອນ ເພື່ອນໍາສະເໜີຜະລິດພັນ ແລະ ການບໍລິການຕ່າງໆ ຂອງ ທຄຮ;
- ຕິດຕາມ ແລະ ປະເມີນການດໍາເນີນງານກ່ຽວກັບການຮ່ວມມື ກັບ ກຸ່ມລູກຄ້າອົງກອນ ຂອງ ທຄຮ;
- ປະສານງານ ແລະ ລົງຢ້ຽມຢາມ ເພື່ອເກັບກໍາ ຂໍ້ສະເໜີ ແລະ ປັບປຸງ ການບໍລິການຂອງ ທຄຮ;
- ລົງຢ້ຽມຢາມ ລູກຄ້າອົງກອນທີ່ເປັນຄູ່ມືທາງທຸລະກິດ ໃນວັນສໍາຄັນຕ່າງໆ ໂດຍສົມທົບກັບໜ່ວຍບໍລິການທົ່ວປະເທດຕາມຄວາມເໝາະສົມ.
- ຮັກສາສາຍສໍາພັນອັນດີ ແລະ ຂະຫຍາຍຂອດການຮ່ວມມື ລະຫວ່າງ ລູກຄ້າອົງກອນ ແລະ ທະນາຄານ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕໍາແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ການຕະຫຼາດ;
  - ການເງິນ-ການທະນາຄານ;
  - ເສດຖະສາດ, ບໍລິຫານທຸລະກິດ ຫຼື ສາຂາອື່ນທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ເປັນຄົນທີ່ມີມະນຸດສໍາພັນດີ, ສາມາດຕິດຕໍ່ປະສານງານກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດໄດ້ທຸກລະດັບ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ສາມາດເດີນທາງໄປຕ່າງແຂວງໄດ້ບາງໄລຍະ ຕາມການມອບໝາຍ;
- ມີປະສົບການໃນວຽກງານວາງແຜນການຕະຫຼາດ, ວິເຄາະການຕະຫຼາດ ຫຼື ຄົ້ນຄວ້າຜະລິດຕະພັນ ຈະພິຈາລະນາເປັນພິເສດ;
- ຜູ້ສະໝັກຈະຕ້ອງມີຄວາມຮູ້ຄວາມສາມາດໃນການສື່ສານເປັນທັງພາສາລາວ ແລະ ອັງກິດໃນລະດັບດີຫຼາຍ, ຖ້າຮູ້ພາສາຕ່າງປະເທດໃດໜຶ່ງເພີ່ມຍິ່ງເປັນການດີ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ, ແລະ ຍຶດໝັ້ນໃນໜ້າທີ່.